# San Diego Unified School District

EUGENE BRUCKER EDUCATION CENTER
4100 Normal Street, San Diego, CA 92103-2682

**William A. Kowba**
Interim Superintendent of Schools

**ເດືອນກຸມພາ 7, 2008**

**ເຖິງພໍ່ແມ່/ຜູ້ປົກຄອງນັກຮຽນທີ່ນັບຖື:**

**ເມື່ອພວກເຮົາເລີ້ມປັບປຸງງົບປະມານໃຫມ່ສໍາຫລັບສົກຮຽນປີ 2008 – 09 ນັ້ນ, ພວກເຮົາຮູ້ວ່າຈະໄດ້ປະເຊີນກັບບັນຫາຍຸ້ງຍາກໃນອ້າງຫນ້າ. ການຕັດສິນກ່ງວກັບງົບປະມານນີ້ຈະຕ້ອງພົວພັນກັບພວກເຮົາທຸກໆຄົນ – ພໍ່ແມ່, ພະນັກງານ, ຄະນະສະພາສູນກາງສຶກສາ ແລະ ຊຸມຊົນທຸກຄົນ – ເພື່ອພວກເຮົາຈະໄດ້ປະຕິບັດງານທຸກໆຢ່າງໃຫ້ດີເລີດສໍາຫລັບເດັກຂອງພວກເຮົາ ແລະ ໂຮງຮຽນຂອງພວກເຮົາ.**

**ບັນດາທ່ານຄົງໄດ້ເຫັນຫົວເລື້ອງກ່ງວກັບ 'ສະພາບສຸກເສີນຕົວຈິງ' ທີ່ເກີດຂຶ້ນໃນຣັຖຄາລີຟໍເນັຍຜ່ານມານັ້ນ. ຂໍ້ສເນີຮ່າງງົບປະມານຂອງເຈົ້າຣັຖທ່ານ** Schwarzenegger **ເພື່ອຫລຸດງົບປະມານໂຄງການ ແລະ ການຊ່ວຍເຫລືອຕ່າງໆ, ຮວມທັງຕັດງົບປະມານເປັນຮ້ອຍລ້ານດອລລາສໍາຫລັບການສຶກສາ*ໃນປີນີ້*, ແລະ ຫລຸດລົງ 4.4 ພັນລ້ານດອລລາ *ສໍາຫລັບປີຕໍ່ໄປ*. ພວກເຮົາຮ່ວມທັງສູນກາງສຶກສາທົ່ວຣັຖຄາລີຟໍເນັຍພຍາຍາມຫາທາງຮັກສາເງິນງົບປະມານປະຈໍາປີນີ້ໄວ້ ເພື່ອໃຫ້ມີຜົນກະທົບກະເທືອນແກ່ຫ້ອງຮຽນ ແລະ ນັກຮຽນຂອງພວກເຮົາ ນ້ອຍທີ່ສຸດເທົ່າທີ່ຈະນ້ອຍໄດ້.**

**ຄວາມກົດດັດກ່ງວກັບງົບປະມານປະຈໍາປີ 2008 – 09 ຈະມີຄວາມຄັບຂັນໃນຫລາຍໆດ້ານ ຊຶ່ງຮ່ວມທັງ:**

- **ຄາດວ່າຈະກະທົບກະເທືອນຈາກ ຮ່າງສເນີການຕັດງົບປະມານຂອງເຈົ້າຣັຖ,**
- **ການຫລຸດທຶນທາຍໂທ 1 ແລະ ກອງທຶນຈາກຣັຖບານກາງ,**
- **ການຫລຸດທຶນຂອງຣັຖ ສະເພາະໂຄງການ** "categorical" **ຕ່າງໆ,**
- **ການແຈກຢາຍທຶນ ຂອງ"ກົດລະບຽບ" ໃຫມ່ໃນ ໂຄງການ** "categorical",
- **ຄ່າການດໍາເນີນງານຂອງໂຮງຮຽນຫລາຍໆດ້ານໄດ້ເພີ້ມສູງຂຶ້ນ,**
- **ການດັດແປງເງິນເດືອນຂອງພະນັກງານ, ແລະ**
- **ຄ່າປະກັນພັຍສຸຂພາບ ແລະ ຜົນລາຍໄດ້ອື່ນໆຂອງພະນັກງານສູງຂຶ້ນ**

**ຄາດຄະເນລ່ວງຫນ້າວ່າພວກເຮົາອາດຖືກຕັດປະມານ 70 ລ້ານດອລລາ. ພວກເຮົາໄດ້ມີການປ່ຽນແປງແລ້ວ ສໍາຫລັບພະນັກງານຫ້ອງການສູນກາງສຶກສາ ໂດຍມີການຫລຸດ ຫລື ຕັດຮອນຄ່າໃຊ້ຈ່າຍສໍາຫລັບປີນີ້. ນອກນີ້ທຸກໆຫ້ອງການໃນສູນກາງສຶກສາຖືກຮຽກຮ້ອງໃຫ້ຕັດຮອນລົງ 10 ຫາ 15 ເປີເຊັນ. ພວກເຮົາຍັງຫາທາງຕັດຮອນທຶນຂອງຫ້ອງການສູນກາງສຶກສາອີກ ຄືຢ່າງນ້ອຍໃນຈໍານວນ ທີຈະມີຜົນສະທ້ອນແກ່ພວກນັກຮຽນຂອງພວກເຮົາ.**

**ສະພາບຫລຸດງົບປະມານນີ້ ຈະມີຜົນສະທ້ອນເຖິງພະນັກງານຫ້ອງການສຶກສາ. ພວກເຮົາຂໍຮ້ອງບັນດາທ່ານ ແລະ ພະນັກງານ, ພໍ່ແມ່ນັກຮຽນ, ໃຫ້ຄວາມຄິດຄວາມເຫັນກ່ງວກັບຕັດຄ່າໃຊ້ຈ່າຍລົງ ແລະ ຊອກຫາທີ່ມາຂອງທຶກເພີ້ມຂຶ້ນ. ຄວາມຄິດເຫັນທຸກໆຢ່າງຈະເປັນຄຸນປະໂຍດຍິ່ງ ແລະ ຈະໄດ້ນໍາມາສຶກສາພິຈາຣະນາ. ເພື່ອສຶກສາເພີ້ມເຕີມກ່ງວກັບເລື້ອງນີ້, ຂໍໃຫ້ອ່ານຢູ່ທີ່** www.sandi.net/budget. **ຕາຫນ່າງຂ່າວນີ້ ຮວມມີທັງຂ່າວການປັບປຸງງົບປະມານຂອງສູນກາງສຶກສາ, ການໃຊ້ເວລາ, ແລະ ບ່ອນຢູ່ທີ່ທ່ານສາມາດສົ່ງຂໍ້ຄິດເຫັນໄປທາງອິນເຕີເນັດ.**

**ພວກຂ້າພະເຈົ້າມີຄວາມຍິນດີ ແລະ ຕ້ອງການຄວາມຊ່ວຍເຫລືອພິເສດຈາກທ່ານເພື່ອກໍາກັບຊັບພະຍາກອນທີ່ມີ ເພື່ອນໍາມາຊ່ວຍເຫລືອພວກນັກຮຽນ ແລະ ນາຍຄຣູໃຫ້ມີຄວາມສໍາເຣັດຕໍ່ໄປ. ຂ້າພະເຈົ້າຈະລາຍງານຄວາມກ້າວຫນ້າກ່ງວກັບການຈັດແຜນງົບປະມານຫາທ່ານເປັນຂັ້ນໆໄປ ເມື່ອໄດ້ຂ່າວໃຫມ່ໆຈາກຣັຖ.**

**ຂໍຂອບໃຈທ່ານອີກເທື່ອນຶ່ງທີ່ໄດ້ຊ່ອຍສ້າງຄວາມດີແກ່ຊີວິດເດັກຂອງພວກເຮົາ.**

**ດ້ວຍຄວາມນັບຖືຢ່າງສູງ,**

**William A. Kowba**
**Interim Superintendent**